ຂ່າວພິທີລົງນາມການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ສະຕາຟິນເທັກ ຈຳກັດຜູ້ດຽວ ວ່າດ້ວຍ ການບໍລິການ E-Commerce

ໃນຕອນບ່າຍ ວັນທີ 27 ກຸມພາ 2020, ຢູ່ທີ່ ສຳນັກງານໃຫຍ່ ບໍລິສັດ ສະຕາຣໂທລະຄົມ ໄດ້ມີການຈັດພິທີລົງນາມການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດ ສະຕາຟິນເທັກ ຈຳກັດຜູ້ດຽວ ວ່າດ້ວຍ ການບໍລິການ E-Commerce. ຕາງໜ້າລົງນາມໃນຄັ້ງນີ້ໂດຍ **ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ ທຄຕລ** ແລະ **ທ່ານ ລິວມິງຮ່າ** ຜູ້ອຳນວຍການບໍລິສັດ ສະຕາຟິນເທັກ ຈຳກັດຜູ້ດຽວ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີຄັ້ງນີ້ໂດຍ **ທ່ານ ສຸລິສັກ ທຳນຸວົງ ຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ ທະນາຄານແຫ່ງ ສປປ ລາວ** ພ້ອມດ້ວຍຄະນະຜູ້ບໍລິຫານທັງສອງຝ່າຍ, ຄະນະພະແນກ, ຄະນະສູນ ແລະ ສາຂາ ຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.



"BCEL E-Commerce" ກໍ່ຄືການຊຳລະສະສາງຄ່າສິນຄ້າ ແລະ ບໍລິການທີ່ສັ່ງຊື້ຜ່ານເວັບໄຊທ໌. ການຮ່ວມມືດັ່ງກ່າວຈະຊ່ວຍສ້າງຄວາມສະດວກສະບາຍໃຫ້ແກ່ລູກຄ້າຂອງ ບໍລິສັດ ສະຕາຟິນເທັກ ຈຳກັດຜູ້ດຽວ ໃນການຊຳລະຜ່ານອອນລາຍ ບໍ່ວ່າຈະເປັນການຈ່າຍຄ່າໂທລະສັບ, ຈ່າຍຄ່າ Internet ແລະ ສາມາດຊື້ໂທລະສັບ ຫຼື ສິນຄ້າ Electronic ທີ່ຂາຍໜ້າ Website ຂອງບໍລິສັດສະຕາຟິນເທັກ ຈຳກັດຜູ້ດຽວ ໃນການຊຳລະສະສາງແບບອອນລາຍໄດ້ຕະຫຼອດ 24 ຊົ່ວໂມງ ໂດຍສາມາດຊຳລະຜ່ານບັດ VISA, MasterCard, JCB, UnionPay, AliPay, WeChatPay ແລະ UPI QR. ການບໍລິການດ້ານ "E-Commerce" ປະກອບສ່ວນໃຫ້ຍອດການຊື້-ຂາຍສິນຄ້າ ແລະ ບໍລິການຕ່າງໆເພີ່ມຂຶ້ນ. ມີສ່ວນຊ່ວຍໃຫ້ເສດຖະກິດມີການຂະຫຍາຍຕົວຂຶ້ນເລື້ອຍໆ ຄ່ຽງຄູ່ກັບການພັດທະນາໃນຍຸກ Digital ຕາມທິດທາງແຜນການຂອງລັດຖະບານ ທີ່ວາງອອກ.

ທຄຕລ ເປັນທະນາຄານທຳອິດ ໃນ ສປປ ລາວ ທີ່ ໃຫ້ບໍລິການ E-Commerce ເຊິ່ງໄດ້ເລີ່ມໃຫ້ບໍລິການມາຕັ້ງແຕ່ປີ 2013, ຮອດປະຈຸບັນມີ 24 ບໍລິສັດ ທີ່ໄດ້ເຊັນສັນຍານຳໃຊ້ລະບົບການຊຳລະຜ່ານ BCEL E-Commerce ມີທຸລະກຳຜ່ານລະບົບດັ່ງກ່າວເພີ່ມຂຶ້ນແຕ່ລະໄລຍະ. ການຮ່ວມມືຄັ້ງນີ້ ຖືເປັນການຮ່ວມມືທີ່ດີ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ສະຕາຟິນເທັກ ຈຳກັດຜູ້ດຽວ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la